ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 206 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 03 AUG 2020

ໜັງສືຊີ້ແຈງ

ຮຽນ : ບັນດາທ່ານຜູ້ຖືຮຸ້ນພາຍໃນ ແລະຕ່າງປະເທດ ຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ຊີ້ແຈງກ່ຽວກັບການເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ 2020 ລ່າຊ້າ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ : ອີງຕາມລະບຽບການທີ່ກ່ຽວຂ້ອງ ບຊລ ຕ້ອງເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ 2020 ພາຍໃນວັນທີ 29 ສິງຫາ 2020 ແຕ່ໃນພາກປະຕິບັດຕົວຈິງ ບຊລ ບໍ່ສາມາດເປີດເຜີຍຂໍ້ມູນດັ່ງກ່າວໄດ້ຕາມກຳນົດເວລາດ້ວຍເຫດຜົນດັ່ງນີ້ :

ເນື່ອງຈາກຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍອີງຕາມແຈ້ງການຂອງຫ້ອງວ່າການນາຍົກລັດຖະມົນຕີ ສະບັບເລກທີ 06 ລົງວັນທີ 29/3/2020 ບໍລິສັດ ບຊລ ໄດ້ປະຕິບັດຕາມຄຳສັ່ງຂອງລັດຖະບານ ຢຸດການຜະລິດໃນເດືອນ 4-6/2020, ເດືອນ 7/2020 ມາຮອດປະຈຸບັນນີ້ ຍ້ອນວ່າການແຂ່ງຂັນຢູ່ທ້ອງຕະຫຼາດໜັກໜ່ວງ ຄາດຄະເນການດຳເນີນທຸລະກິດຂາດທຶນ ອີງຕາມຄຳເຫັນຂອງສະພາບໍລິຫານ ບໍລິສັດ ສືບຕໍ່ຢຸດການຜະລິດ, ປະຈຸບັນນີ້ສະພາບໍລິຫານກັບຜູ້ຖືຮຸ້ນແຕ່ລະຝ່າຍກຳລັງດຳເນີນການ ແລະຊອກຫາວິທີຢ່າງຕັ້ງໜ້າເພື່ອໃຫ້ບໍລິສັດ ສາມາດປະກອບຮຸ້ນ ຫຼືດຳເນີນທຸລະກິດຢ່າງຕໍ່ເນື່ອງໄດ້. ພວກເຮົາໄດ້ສະເໜີການເລື່ອນເວລາເປີດເຜີຍເອກະສານລາຍງານການເງິນຮອດທ້າຍປີ 2020.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະພິຈາລະນາຕາມຄວນ.

ຮຽນດ້ວຍຄວາມນັບຖືຢ່າງສູງ.

ຜູ້ອຳນວຍການ ບຊລ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ